ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສໍາພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ຄະນະນຳ ແລະ ສະມາຊິກສາມອິງການຈັດຕັ້ງມະຫາຊົນ ທຫລ
# ລົງຢ້ຽມຢາມຫໍພິພິຕະພັນ ສິລະປະລາວ



ໃນຕອນບ່າຍຂອງວັນທີ 14 ສິງຫາ 2025, ຄະນະນຳ ແລະ ສາມອົງການຈັດຕັ້ງມະຫາຊົນ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ລົງຢ້ຽມຢາມຫໍພິພິຕະພັນສິລະປະລາວ (ໜອງເຊືອມ) ໂດຍການໃຫ້ກຽດນຳພາຂອງທ່ານ ອາລຸນ ບຸນຍົງ ຮອງຜູ້ວ່າການ ທຫລ, ຄະນະບໍລິຫານງານ ແລະ ສະມາຊິກສາມອົງການຈັດຕັ້ງ ມະຫາຊົນ ເຂົ້າຮ່ວມຈຳນວນ 40 ສະຫາຍ.



ຈຸດປະສົງການລົງຢ້ຽມຢາມພິພິຕະພັນໃນຄັ້ງນີ້ ກໍ່ແມ່ນເພື່ອເປັນການສ້າງຂະບວນການເພື່ອຂໍ່ານັບຮັບຕ້ອນກອງປະຊຸມໃຫຍ່ຄັ້ງທີ V ຂອງອົງຄະນະພັກ ທຫລ ທີ່ຈະໄຂຂຶ້ນໃນມໍ່ໆນີ້ ຊຶ່ງການລົງຢ້ຽມຢາມໃນຄັ້ງນີ້ ແມ່ນໃຫ້ກຽດຕ້ອນຮັບຄະນະໂດຍ ທ່ານ ພິຊິດ ໄຊຍະສິດ ປະທານຫໍພິພິຕະພັນ ສິລະປະລາວ ຮ່ວມສະໄໝ.





ພ້ອມນີ້ ຜູ້ເຂົ້າຮ່ວມຍັງໄດ້ຢ້ຽມຊົມງານສິລະປະໄມ້ແກະສະຫຼັກ, ຮູບແຕ້ມ ແລະ ອື່ນໆ ທີ່ວາງສະແດງໃນພິພິຕະພັນດັ່ງກ່າວ ພ້ອມທັງ ຮັບຟັງການບັນຍາຍລະຫວ່າງການທ່ຽວຊົມອີກດ້ວຍ.

**ພາບ ແລະ ຂ່າວ: ຫ້ອງການ ທະນາຄານແຫ່ງ ສປປ ລາວ**

ຮັກບ້ານເກີດເມືອງນອນ ໃຊ້ ຈ່າຍ ທອນ ເປັນເງິນກີບ